**ການບ້ານບົດທີ 4 ພາກຕົ້ນ**

# ກັບໄປເມືອງໂກລິນໂທ

(ກິດຈະການ 20:2-3)

## ຂຽນພະທຳໂລມ

(ໂລມ 15:12 ເຖິງ 16:27)

**1** ກ. ຕາມໃນແຜນທີ່ຕໍ່ໄປນີ້ ເຫັນວ່າໂປໂລໄປປະກາດຂ່າວປະເສີດແລ້ວ. ໃນສອງແຂວງໃດ?

_____________________________ ແລະ _____________________________

ຂ. ເພິ່ນເລີຍເດີນທາງໄປທາງໄຕ້ ໄປເຖິງແຂວງອະຂາຢາ, ແຂວງນີ້ແມ່ນປະເທດໃດ? (ກຈກ 20:2) ____________________________________________________

ຄ. ຢູ່ຈັກເດືອນ? (ກຈກ 20:3) __________________________________________

ງ. ຢູ່ເມືອງໃດ? (ເບິ່ງແຜນທີ່) ____________________________________________

ຈ. ນັບທັງເທື່ອນີ້ ໂປໂລໄປຫາເຂົາຈັກເທື່ອ? (2 ກລທ 12:14) ____________________

ສ. ໂປໂລເຕືອນໃຫ້ເຂົາຕຽມຫຍັງໃຫ້ພ້ອມ? (2 ກລທ 9:5 ແລະ ໂລມ 15:26) ________

ຊ. ຕຽມໄວ້ເພື່ອພີ່ນ້ອງທີ່ທຸກຍາກຢູ່ໃສ? (ໂລມ 15:25-26) ______________________



**2** ກ. ໂປໂລຮັບໃຊ້ພະເຈົ້າມາຫຼາຍປີ. ວຽກງານຂອງໂປໂລໃນແຂວງນັ້ນເປັນຢ່າງໃດ? (ໂລມ 15:23) ______________________________________________

ຂ. ໂປໂລໄດ້ປະກາດຂ່າວປະເສີດເລື່ອງພະຄຼິດຢ່າງຄົບຖ້ວນ ຕັ້ງແຕ່ໃສແລະອ້ອມໄປເຖິງແຂວງໃດ? (ໂລມ 15:19) ________________________________________

**3** ເຖິງວ່າໂປໂລອາຍຸປະມານ 57 ປີ ກໍຕາມ, ເພິ່ນຍັງບໍ່ພ້ອມທີ່ຈະເລີກປະກາດເທື່ອ ແຕ່ຈະໄປປະກາດທາງທິດ ຕາເວັນຕົກ ຄືຈະໄປປະເທດໃດ? (ໂລມ 15:24) ________________

*ແຜນທີ່ຕໍ່ໄປນີ້ສະແດງທັງ 3 ເທື່ອທີ່ໂປໂລເດີນທາງໄປປະກາດແລະຍັງວາງແຜນໄປເທື່ອທີ 4 ອີກ.*




**4** ໂປໂລຕັ້ງໃຈຈະເດີນທາງຈາກເມືອງອັນຕີໂອເຂັຍແຂວງຊີເລັຍ, ໄປປະກາດເຖິງປະເທດສະເປນ. ໄປໄກປານໃດ? (ໃຫ້ເລືອກ)

ກ. ໃກ້ກ່ວາໄລຍະທາງໄປປະກາດເທື່ອກ່ອນ.

ຂ. ເທົ່າກັບໄລຍະທາງໄປປະກາດເທື່ອກ່ອນ.

ຄ. ໄກກ່ວາໄລຍະທາງໄປປະກາດເທື່ອກ່ອນຫຼາຍ.

**5** ແຕ່ກ່ອນໂປໂລອາໃສຄຼິດສະຕະຈັກໃນອັນຕີໂອເຂຍແຂວງຊີເລຍເປັນສູນກາງການສະໜັບສະໜຸນໃນການອອກ ໄປປະກາດແຕ່ວ່າປະເທດສະເປນໄກເກີນໄປ. ເພິ່ນອາດຈະຕ້ອງຊອກຫາສູນກາງໃໝ່ ຈຶ່ງຈະປະກາດ ທາງທິດຕາເວັນຕົກໄດ້ສະດວກ. ຕ້ອງການຄຼິດສະຕະຈັກ ດັ່ງຕໍ່ໄປນີ້:

- ຄຼິດສະຕະຈັກທີ່ຕັ້ງໝັ້ນຄົງ.
- ຄຼິດສະຕະຈັກທີ່ຢູ່ບໍ່ໄກຈາກປະເທດສະເປນ.
- ສະຖານທີ່ເໝາະສົມໃນເວລາຈະກັບມາພັກ.
- ຄຼິດສະຕະຈັກທີ່ເພື່ອແຜ່ຊ່ວຍເຫຼືອ ແລະສະໜັບສະໜຸນ.

ກ. ຄຼິດສະຕະຈັກທີ່ເໝາະສົມ ຄື ຄຼິດສະຕະຈັກໃດ? (ໂລມ 1:7) __________________

ຂ. ໂປໂລຫວັງວ່າເຂົາຈະຊ່ວຍຢ່າງໃດ? (ໂລມ 15:24) ________________________

ຄ. ຊ່ວຍເມື່ອຈະໄປປະເທດໃດ? ________________________________________

**6** ຄຣິດສະຕະຈັກໂລມກໍເໝາະສົມເພາະຢູ່ບໍ່ໄກຈາກປະເທດສະເປນ ແລະກໍ່ມີພີ່ນ້ອງຄຣິດສະຕຽນຫຼາຍຄົນທີ່ໄປຢູ່ໃນ ກຸງໂລມ ຊຶ່ງເປັນນະຄອນຫຼວງຂອງຈັກກະພັດໂລມ. ໃນພະທຳໂລມ ບົດທີ 16 ໂປໂລຍົກຊື່ພີ່ນ້ອງຄຣິດສະຕຽນ ຫຼາຍຄົນ ທັງຍົກຊື່ຄອບຄົວອີກດ້ວຍ.

ກ. ໃນ ໂລມ 16:3 ເຫັນຊື່ສອງຜົວເມຍໃດ ທີ່ຮ່ວມງານກັບໂປໂລໃນເມືອງເອເຟໂຊ ຈາກນັ້ນເຂົາຍ້າຍ ທີ່ຢູ່ ກັບໄປກຸງໂລມ? ____________________ ແລະ _____________

ຂ. ໃນໂລມບົດໃດ ທີ່ໂປໂລຍົກຊື່ພີ່ນ້ອງຄຣິດສະຕຽນຫຼາຍຄົນ? ___________________

**7** ເຖິງວ່າໂປໂລບໍ່ເຄີຍໄປເຖິງກຸງໂລມກໍຕາມ, ແຕ່ເພິ່ນຍັງມີພີ່ນ້ອງຄຣິດສະຕຽນຫຼາຍຄົນທີ່ໃກ້ຊິດກັບເພິ່ນ. ຈົດໝາຍທີ່ ໂປໂລຂຽນໄປຫາເຂົານີ້ເປັນທີ່ໜູນໃຈ ແລະສັ່ງສອນຄຣິດສະຕຽນໃນທຸກສະໄໝເລື້ອຍມາ.

ກ. ແມ່ນພະທຳສາມສະບັບໃດ ທີ່ໂປໂລຂຽນໃນເວລາເດີນທາງໄປປະກາດເທື່ອທີສາມນີ້? (ເບິ່ງຕາມຕາຕະລາງ "ຈົດໝາຍຂອງໂປໂລ" ໜ້າ 117) ______________________

ຂ. ໃນເວລານັ້ນໂປໂລອາຍຸປະມານຈັກປີ? _______________________________

ຄ. ຂຽນສາມສະບັບນັ້ນຈາກເມືອງໃດ? __________________________________

**8** ກ. ໂປໂລພັກໃນເຮືອນຂອງໃຜ? (ໂລມ 16:23) ____________________________

ຂ. ຄາໂຢຮັບພິທີບັບຕິສະມາຈາກໃຜ? (1 ກລທ 1:14) ______________________

ຄ. ຄາໂຢຮັບພິທີບັບຕິສະມານັ້ນ ໃນເວລາໂປໂລໄປປະກາດຂ່າວປະເສີດເທື່ອທີ 2 ຕອນນັ້ນໂປໂລ ລໍຖ້າສອງຄົນໃດຈະມາ? (ກຈກ 18:5) __________________________

**9** ຕີໂຕເອົາຂ່າວດີມາຈາກຄຣິດສະຕະຈັກໂກລິນໂທວ່າບັນຫາທີ່ເຄີຍມີມາ ແກ້ໄຂໄດ້ແລ້ວ, ດັ່ງນັ້ນໂປໂລກໍສະບາຍ ໃຈໄດ້ແລ້ວ. ເພິ່ນກໍເລີຍສາມາດຂຽນຄຳສອນທີ່ເລິກເຊິ່ງໄດ້ ເພາະບໍ່ໄດ້ຫຍຸ້ງໃຈເລື່ອງບັນຫາຕ່າງ ໆ. ໃຫ້ອ່ານ ໂລມ 1:16.

ກ. ໂປໂລບໍ່ມີຄວາມລະອາຍໃນຫຍັງ? ________________________________

ຂ. ຂ່າວປະເສີດນັ້ນເປັນລິດເດດຂອງໃຜ? _____________________________

ຄ. ເພື່ອໃຫ້ຄົນໃດໄດ້ຮັບຄວາມພົ້ນ? ________________________________

ງ. ພວກໃດກ່ອນ? ___________________________________________

ຈ. ແລະພວກໃດອີກດ້ວຍ? _____________________________________

**10** ກ. ໃນພະທຳໂລມນີ້ ໂປໂລອະທິບາຍວ່າ ທັງຄົນຢິວແລະຄົນຕ່າງຊາດຈະມີຄວາມຊອບທຳໂດຍອາໄສຫຍັງ? (ໂລມ 1:17) ___________________________________

ຂ. ໂປໂລຍົກຂໍ້ຈາກພະທຳພິເດີມທີ່ວ່າ (ໂລມ 1:17) "ຜູ້ທີ່ຊົງຖືວ່າເປັນຄົນ____________ ເພາະດ້ວຍຄວາມ _______ ຜູ້ນັ້ນ ແຫຼະຈະໄດ້ _________ ". (ໃຫ້ຕື່ມຄວາມທີ່ຂາດ)

*ນັ້ນແຫຼະເປັນຂໍ້ສຳຄັນໃນພະທຳໂລມ*

**11** ກ. ພະທຳໂລມນີ້, ມີສ່ວນຄ້າຍຄືກັບພະທຳຄາລະເຕຍ ຫົວຂໍ້ສຳຄັນໃນຄາລະເຕຍ 2:16 ກໍສອນວ່າ "... ບໍ່ມີຜູ້ໃດຖືກ ຊົງຖືວ່າ ______________ ໂດຍການປະຕິບັດຕາມພະບັນຍັດ ແຕ່ໂດຍທາງຄວາມ ________ ໃນ ____________ ເທົ່າ ນັ້ນ..." (ໃຫ້ຕື່ມຄວາມທີ່ຂາດ)

ຂ. ເນື້ອເລື່ອງໃນພະທຳໂລມ ຄ້າຍຄືກັນກັບເນື້ອເລື່ອງໃນພະທຳໃດອີກ? _____________

**12** ເຖິງວ່າຫົວເລື່ອງໃນສອງພະທຳນັ້ນຄ້າຍຄືກັນກໍຕາມ ແຕ່ວິທີສະເໜີເລື່ອງນັ້ນແຕກຕ່າງກັນຫຼາຍ.

ກ. ພະທຳໃດ ທີ່ໂປໂລໃຈຮ້າຍແກ່ຄົນທີ່ມາສອນບໍ່ຈິງ ຢ້ານວ່າເຂົາຈະທຳລາຍຄຼິດສະຕະຈັກທີ່ຕັ້ງຂຶ້ນໃໝ່ ໆ?_________________________________________________

ຂ. ອີກພະທຳໜຶ່ງ ສະເໜີເຫດແລະຜົນເລື່ອງຂ່າວປະເສີດຢ່າງລະອຽດໂດຍທ່າທີອ່ອນຫວານ ຄືພະທຳໃດ? _________________________________________________

**13** ໃນພະທຳໂລມນີ້ ໂປໂລມີຈຸດປະສົງທີ່ຈະສອນເລື່ອງການຄືນດີກັບພະເຈົ້າໂດຍທາງຄວາມເຊື່ອ, ສອນໃຫ້ສອງ ພວກໃດ? (ໂລມ 1:16) _____________ ແລະ _____________ ຄຼິດສະຕະຈັກໃນກຸງໂລມມີທັງສອງພວກ.

**14** ກ. ກຸງໂລມເປັນນະຄອນຫຼວງຂອງຈັກກະພັດໂລມ ດັ່ງນັ້ນປະຊາຊົນສ່ວນຫຼາຍຈະເປັນຊາດຢິວ ຫຼືຄົນຕ່າງຊາດ? ____________________________________________

ຂ. ດັ່ງນັ້ນຄົນສ່ວນຫຼາຍໃນຄຼິດສະຕະຈັກຈະເປັນຄົນພວກໃດ? ___________________

**15** ເຖິງຢ່າງນັ້ນກໍຕາມແຕ່ຍັງມີຊາດຢິວຫຼາຍຄົນໃນກຸງໂລມ. ນັກປະຫວັດສາດຄົນນຶ່ງທີ່ມີຊື່ວ່າໄຟໂລ ບອກວ່າເຈົ້າຈັກກະພັດ ໂລມ ອະນຸຍາດໃຫ້ຄົນຢິວປະຕິບັດຕາມສາສະໜາຂອງເຂົາ ແລະ ຫຍິ່ງກ່າວນັ້ນອີກ ເຈົ້າຈັກກະພັດໂລມຍັງຈັດສະຖານທີ່ ຊະເພາະເພື່ອການປະຕິບັດທາງສາສະໜາຢິວ. ເຈົ້າຈັກກະພັດນັ້ນຊື່ຫຍັງ? (ລູກາ 2:1) __________________________

*ແຜນທີ່ຕໍ່ໄປນີ້ ສະແດງເຖິງການຍ້າຍໄປມາຂອງນາງປີຊະກີລາກັບທ່ານອາກີລາ.*









**16** ກ. ໃນກິດຈະການ 18:2 ເຫັນຊື່ຂອງອາກີລາກັບປີຊາກີລາເປັນເທື່ອທຳອິດ. ເຂົາຕ້ອງ ອອກຈາກໃສໄປ? ____________________

ຂ. ເຈົ້າຈັກກະພັດໃດ ສັ່ງໃຫ້ອອກ? ____________________

ຄ. ແມ່ນໂດຍເຫດໃດ ທີ່ເຂົາຕ້ອງອອກ? ____________________

ງ. ໂປໂລພົບເຂົາໃນເມືອງໃດ? (ກຈກ 18:1-2) ____________________

ຈ. ການຍ້າຍເທື່ອທຳອິດນັ້ນ ສະແດງມາໃນແຜນທີ່ໃດ? (ເທິງ, ກາງ ຫຼື ລຸ່ມ ໜ້າ 58) ______

ສ. ຫຼັງຈາກນັ້ນເຂົາໄປໃສກັບໂປໂລ? (ກຈກ 18:19) ____________________

ຊ. ສະແດງໃນແຜນທີ່ໃດ? ____________________

ຍ. ໃນ ໂລມ 16:3 ເຫັນວ່າເຂົາກັບໄປຢູ່ໃສອີກ? ____________________

ດ. ສະແດງໃນແຜນທີ່ໃດ? ____________________

*(ມີເຈົ້າຈັກກະພັດໃໝ່)*

**17** ກ. ເມື່ອເວລາໂປໂລຍັງຢູ່ກັບເຂົາໃນເມືອງເອເຟໂຊ ເພິ່ນຕັດສິນໃຈວ່າຈະໄປແຂວງ ມາເກໂດເນຍໄປແຂວງອາຊາຢາ ແລະກຸງເຢລູຊາເລັມ. ແຕ່ຍັງຢາກເຫັນກຸງໃດ? (ກຈກ 19:21) ____________________

ຂ. ຈະເປັນເພາະໂປໂລຮູ້ວ່າອາກີລາກັບປີຊາກີລາຈະໄປ ແລ້ວໂປໂລຈຶ່ງຢາກໄປ. ຫຼືວ່າອາ ກີລາກັບປີຊະກີລາ ຮູ້ວ່າ ໂປໂລຈະໄປ ເຂົາຈຶ່ງວາງແຜນກໍບໍ່ຮູ້ແນ່ນອນ. ແຕ່ຜົນສຸດທ້າຍ ເຂົາທັງສອງຝ່າຍກໍຕັດສິນໃຈວ່າຈະໄປໃສ? ____________________

| |
|---|
| ເຫັນວ່າພື້ນຖານເລື່ອງພະທຳໂລມສຳຄັນຫຼາຍປະການ ປາກົດມາໃນບົດທີ 1, 15 ແລະ 16. ຂໍໃຫ້ທ່ານຂີດກ້ອງຂໍ້ພະຄຳພີ ດັ່ງຕໍ່ໄປນີ້: ໂລມ 1:16-17. ໂລມ 15:24. ໂລມ 16:3. |

**18** ກ. ໃນສາມບົດນັ້ນ (ບົດ 1, 15 ແລະ 16) ແມ່ນບົດໃດ ທີ່ອະທິບາຍວ່າແມ່ນແຕ່ໂດຍຄວາມ ເຊື່ອຂອງເຮົາທີ່ຈະຄືນດີ ກັບພະເຈົ້າໄດ້? (ເປັນຄົນຊອບທຳ) ____________________

ຂ. ໃນບົດໃດ ທີ່ໂປໂລວາງແຜນຈະໄປປະກາດຂ່າວປະເສີດເຖິງປະເທດສະເປນ ຫວັງວ່າຄຼິດ ສະຕະຈັກໃນ ກຸງໂລມຈະສະໜັບສະໜຸນ? ____________________

ຄ. ບົດໃດ ທີ່ໂປໂລທັກທາຍພີ່ນ້ອງຄຼິດສະຕຽນຫຼາຍຄົນທີ່ຍ້າຍໄປຢູ່ໃນກຸງໂລມ? ________

**19** ກ. ໂປໂລພັກຢູ່ໂກລິນໂທເທື່ອສຸດທ້າຍນີ້ຈັກເດືອນ? (ກຈກ 20:3) ________________

ຂ. ໂປໂລສວຍໂອກາດຝາກຈົດໝາຍເຖິງຄຼິດສະຕະຈັກໂລມ. ຝາກໄປກັບໃຜ? (ໂລມ 16:1)

ຄ. ນາງຟອຍເບ ມາຈາກຄຼິດສະຕະຈັກໃດ? ____________________

ງ. ໂປໂລຂໍໃຫ້ເຂົາຕ້ອນຮັບນາງນັ້ນໃນນາມຂອງໃຜ? (ໂລມ 16:2) ________________

ຈ. ຂໍໃຫ້ເຂົາຊ່ວຍນາງເພາະຫຍັງ? ____________________

*ຈົ່ງຮັບພິຈາລະນາ ແລະ ອ້ອນວອນ*

- *ໂປໂລຊັກຊວນພີ່ນ້ອງຄຣິດສະຕຽນຊາດຢິວ ໃຫ້ສະໜັບສະໜຸນໃນການປະກາດຂ່າວປະເສີດ ຕໍ່ຄົນຕ່າງຊາດໃນປະເທດສະເປນ. (ໂລມ 15:8-12 ແລະ ໂລມ 15:20-21)*
- *ຄຣິດສະຕຽນຮັບຜິດຊອບໃນການປະກາດຂ່າວປະເສີດຕໍ່ຄົນຕ່າງປະເທດ ແລະ ຄົນຕ່າງຊົນເຜົ່າ*
- *ຄຣິດສະຕະຈັກຂອງທ່ານຈະປະຕິບັດຕາມການນັ້ນໄດ້ຢ່າງໃດ!*

*ຢ່າລືມບົດເສັງ!*

ຕອບ:

**1** *ກ. ມາເກໂດເນຍ ແລະ ອີລີລິກົນ. ຂ. ກຼີກ. ຄ. ຢູ່ 3 ເດືອນ. ງ. ໂກລິນໂທ.*
*ຈ. 3ເທື່ອ. ສ. ເຄື່ອງທານ. ຊ. ກຸງເຢລູຊາເລັມ.*

**2** *ກ. ບໍ່ມີຕໍ່ໄປອີກ (ສຳເລັດກໍວ່າໄດ້).*
*ຂ. ຕັ້ງແຕ່ເຢລູຊາເລັມ ເຖິງ ອີລີລີກົນ.*

**3** *ສະເປນ (ແອັດສະປາຍ).*

**4** *ຂໍ້ ຄ ຖືກ.*

**5** *ກ. ຄຣິດສະຕະຈັກໂລມ. ຂ. ຈັດສິ່ງໃຫ້ເດີນທາງຕໍ່ໄປ. ຄ. ສະເປນ.*

**6** *ກ. ນາງປີຊະກາ ແລະ ທ່ານອາກີລາ. ຂ. ໂລມ ບົດທີ 16*

**7** *ກ. 1 ກລທ, 2 ກລທ,ໂລມ. ຂ. ປະມານ 57 ປີ. ຄ. ໂກລິນໂທ.*

**8** *ກ. ຄາໂຢ. ຂ. ໂປໂລ. ຄ. ຊີລາກັບຕີໂມທຽວ.*

**9** *ກ. ໃນຂ່າວປະເສີດ. ຂ. ຂອງພະເຈົ້າ. ຄ. ທຸກຄົນທີ່ເຊື່ອ. ງ. ພວກຢິວ.*
*ຈ. ຄົນຕ່າງຊາດ.*

**10** *ກ. ຄວາມເຊື່ອ. ຂ. ຊອບທຳ... ເຊື່ອ... ຊີວິດ.*

**11** *ກ. ຊອບທຳ... ເຊື່ອ... ພະເຢຊູຄຣິດ. ຂ. ຄາລາເຕຍ.*

**12** *ກ. ຄາລາເຕຍ. ຂ. ໂລມ.*

**13** *ຢິວແລະຄົນຕ່າງຊາດ.*

**14** *ກ. ຄົນຕ່າງຊາດ. ຂ. ຄົນຕ່າງຊາດ.*

**15** *ກາຍຊາໂອຄຸໂຕ.*

ຕອບ (ຕໍ່):

**16** *ກ. ອອກຈາກກຸງໂລມ. ຂ. ກະລາວດີໂອ. ຄ. ເພາະເປັນຊາວຢິວ.*
*ງ. ໂກລິນໂທ. ຈ. ແຜນທີ່ເທິງ. ສ. ເອເຟໂຊ. ຊ. ແຜນທີ່ກາງ. ຍ. ໂລມ.*
*ດ. ແຜນທີ່ລຸ່ມ.*

**17** *ກ. ໂລມ ຂ. ໄປ ກຸງໂລມ.*

**18** *ກ. ບົດທີ 1 ຂ. ບົດທີ 15 ຄ. ບົດທີ 16*

**19** *ກ. ສາມເດືອນ. ຂ. ຟອຍເບ. ຄ. ເກັນເຂໂອ. ງ. ພະຜູ້ເປັນເຈົ້າ.*
*ຈ. ເພາະນາງໄດ້ຊ່ອຍໃຫ້ການສົງເຄາະຫຼາຍຄົນ.*

**ການບ້ານບົດທີ 4 ພາກປາຍ**

# ບໍ່ມີຄົນຊອບທຳຈັກຄົນ

(ບົດ 1-3)

*ບົດຮຽນນີ້ອາດຈະຍາວ ເພາະອະທິບາຍເລື່ອງຫຼັກໂອວາດທີ່ອາດຈະເຂົ້າໃຈຍາກ. ຢ່າຟ້າວຟັ່ງໃນການ ຮຽນ ຢ້ານວ່າຈະບໍ່ເຂົ້າໃຈດີ!*

**1** ໂປໂລຂຽນຈົດໝາຍສະບັບນີ້ຈາກໃນເຮືອນຂອງຄາໂຍ ຄື ເມືອງໃດ? _______________
ເມືອງນັ້ນເຕັມໄປດ້ວຍຮູບພະ ຢ່າງທີ່ທ່ານຮຽນໃນໂປໂລເຫຼັ້ມທີສອງ ບົດ 7 ພາກປາຍ.

**2** ໂປໂລ ງຶງ ເພາະເຫັນວ່າໃນເມືອງໂກລິນໂທທຸກຫົນທຸກແຫ່ງເຕັມໄປດ້ວຍຄວາມບາບ. ໃນພະທຳ ໂລມ ບົດ 1-3 ນີ້ ຍັງຄິດເຖິງຄວາມບາບທົ່ວໄປທີ່ພົບເຫັນ ແຕ່ຍັງມີວິທີແກ້.

ກ. ໂລມ 1:17 ບອກວ່າໃນ _________________ ນັ້ນ ພະເຈົ້າໄດ້ຊີ້ງສະແດງໃຫ້ມີຄວາມຊອບທຳໂດຍອາໄສຄວາມ ເຊື່ອແຕ່ສິ່ງດຽວ. (ໃຫ້ຕື່ມຄວາມທີ່ຂາດ)

ຂ. ໃນ ໂລມ 1:18 ພະພິໂລດຂອງພະເຈົ້າກຳປາກົດມາຈາກສະຫວັນ ຕໍ່ສູ້ຄວາມໝິ່ນປະໝາດພະອົງ ແລະຫຍັງອີກ? _______________________________________________

ຄ. ຄວາມຊົ່ວຮ້າຍນັ້ນຄັດຂວາງຫຍັງ? _______________________________________

**3** ໂປໂລເຫັນຄວາມບາບຢ່າງຊົ່ວຮ້າຍນັ້ນ ເລີຍເລີ້ມຕົ້ນຕິຕຽນຢ່າງເປີດເຜີຍ. ຄວາມບາບທີ່ເຫັນໃນໂກລິນໂທ ມີຢູ່ 3 ດ້ານ ເປັນຕົ້ນຄື:

- ການນະມັດສະການຮູບເຄົາລົບ
- ການຮັກຮ່ວມເພດດຽວກັນ
- ການທຳຮ້າຍທຸກຢ່າງ

ກ. ໃນສາມດ້ານທີ່ໝາຍໄວ້ໂດຍດາວແມ່ນການໃດ ທີ່ສະແດງອອກມາໃນໂລມ 1:18-25 ເປັນຕົ້ນ? ______________________________________________________

ຂ. ການອັນໃດໃນ ໂລມ 1:26-27 ທີ່ຖືກກັບໝາຍດາວ? __________________________

ຄ. ແລະ ການອັນໃດໃນ ໂລມ 1:28-31 ທີ່ຖືກກັບໝາຍດາວ? _____________________

**4** ໃນໂລມ ບົດທີ 1 ໂປໂລຕິຕຽນເລື່ອງຄວາມຜິດບາບຂອງຄົນຕ່າງຊາດເປັນຕົ້ນ ຄົນຢິວທີ່ອ່ານໃນບົດທີ 1 ນັ້ນອາດຈະຖືຕົວວ່າເຂົາຖືພະຜູ້ເປັນເຈົ້າອົງທ່ຽງແທ້. ແທນທີ່ຈະຂາບໄຫວ້ຮູບເຄົາລົບ.

ກ. ແຕ່ມາເຖິງໂລມບົດທີ 2 ຂໍ້ 17 ໂປໂລກ່າວໂທດຊາດໃດ? _____________________

ຂ. ເພາະເຂົາເພິ່ງພາອາໄສຫຍັງ? __________________________________________

ຄ. ແລ້ວອວດວ່າມີໃຜ? _________________________________________________

**5** ໃນ ໂລມ 2:1 ໂປໂລບໍ່ໄດ້ກ່າວເຖິງຊາດຢິວໂດຍກົງ ແຕ່ເຫັນວ່າເພິ່ນອ້າງເຖິງສ່ວນອ່ອນແອຂອງຄົນຢິວ ຄືເປັນຕາມ ນິໄສຂອງຄົນຢິວທີ່ມັກກ່າວໂທດໃສ່ຄົນອື່ນ.

ກ. ເມື່ອເຂົາກ່າວໂທດໃສ່ຜູ້ອື່ນ ເຂົາບໍ່ມີຂໍ້ຫຍັງ? ______________________________

ຂ. ເຂົາແກ້ຕົວບໍ່ໄດ້ເພາະຫຍັງ? ________________________________________

ຄ. ຜູ້ກ່າວໂທດໃສ່ເຂົາກໍເຮັດຢ່າງໃດ? ____________________________________

ງ. ເຂົາແກ້ງເຮັດຄືເພິ່ງພາອາໄສຫຍັງ? (ໂລມ 2:17) __________________________

ຈ. ໃນ ໂລມ 2:17 ນັ້ນ, ເຫັນແລ້ວວ່າໂປໂລໄດ້ວ່າກ່າວແກ່ຊາດໃດ? _______________

**6** ຖ້າເຂົາລ່ວງລະເມີດພະບັນຍັດ ການທີ່ເຂົາຮັບພິທີຕັດເປັນຢ່າງໃດ?
(ໂລມ 2:25) ____________________________________________________

**7** ໃນ ໂລມ ບົດທີ 3, ໂປໂລເອົາເລື່ອງຈາກບົດທີໜຶ່ງກ່ຽວກັບບາບຂອງຄົນຕ່າງຊາດ ມາຮ່ວມກັບບົດທີສອງທີ່ກ່າວເລື່ອງ ບາບຂອງຄົນຢິວ.

ກ. ໃນ ໂລມ 3:9 ໂປໂລເຫັນວ່າທັງສອງຊາດໃດ ຢູ່ໃຕ້ອຳນາດຂອງຄວາມຜິດບາບ?

___________________________ ແລະ ____________________________

ຂ. ໂລມ 3:23 ບອກວ່າທຸກຄົນໄດ້ເຮັດຫຍັງ? _________________________________

**8** ໂປໂລຍົກເຫດແລະຜົນທີ່ພິສູດວ່າ ທັງຄົນຢິວແລະຄົນຕ່າງຊາດເປັນຄົນຜິດບາບເໝືອນກັນໝົດ.

ກ. ພະເຈົ້າຈະປະທານຄວາມຊອບທຳໃຫ້ທຸກຄົນໄດ້ໂດຍອາໄສຫຍັງ?
(ໂລມ 3:22) ______________________________

ຂ. ໂປໂລກ່າວເລື່ອງຄວາມບາບຂອງພວກໃດ ຊະເພາະໃນໂລມບົດທີໜຶ່ງ? __________

ຄ. ກ່າວເລື່ອງຄວາມບາບຂອງພວກໃດ ສະເພາະໃນໂລມບົດທີສອງ? __________

ງ. ກ່າວເລື່ອງຄວາມບາບຂອງໃຜ ໃນໂລມບົດທີ 3 (ເຖິງຂໍ້ 20)? __________

**9** ທວນຄືນ.

ກ. ແມ່ນສາມບົດໃດໃນພະທຳໂລມ ທີ່ກ່າວເລື່ອງຄວາມບາບ ຄື ທຸກຄົນເປັນຄົນບາບ?

______________________________

ຂ. ໃນ ໂລມ 3:20 ໂປໂລສະຫລູບເລື່ອງນີ້ໂດຍກ່າວວ່າ ບໍ່ມີມະນຸດຈັກຄົນທີ່ຈະເປັນຄົນຊອບທຳໂດຍຖືຫຍັງ? ______________________________

ຄ. ພະບັນຍັດມີແຕ່ເຮັດໃຫ້ສັງເກດຮູ້ຈັກຫຍັງ? ______________________________

## ແຕ່ຍັງຖືວ່າເປັນຄົນຊອບທຳ

(ໂລມ ບົດ 4-5)

**10** ທີ່ຈິງສ່ວນນີ້ເລີ້ມຕົ້ນກ່ອນບົດທີ 4, ເລີ້ມຕັ້ງແຕ່ ໂລມ 3:21 ເປັນຕົ້ນໄປ.

ກ. ໃນ ໂລມ 3:21 ຄວາມຊອບທຳນັ້ນມາຈາກໃຜ? ______________________________

ຂ. ປາກົດມານອກຈາກຫຍັງ? ______________________________

ຄ. ພະເຈົ້າຊົງປະທານແກ່ຄົນໃດ? (ໂລມ 3:22) ______________________________

ງ. ດ້ວຍອາໄສຄວາມເຊື່ອໃນໃຜ? ______________________________

ຈ. ໄດ້ຖືວ່າເຮົາເປັນຄົນຊອບທຳໂດຍພະຄຸນຂອງພະເຈົ້າທີ່ບໍ່ຄິດຫຍັງ?
(ໂລມ 3:24) ______________________________

ສ. ພະເຈົ້າໄຖ່ໂທດແທນບາບໂດຍຄວາມເຊື່ອໃນພະໂລຫິດຂອງໃຜ?
(ໂລມ 3:25) ______________________________

*ພະອົງຊົງຊອບທຳຈຶ່ງຍົກໂທດໃຫ້ລ້າ ໆ ບໍ່ໄດ້, ແຕ່ພະອົງຊົງຮັກເຮົາຈຶ່ງໄດ້ຊະລະພະອົງເອງຮັບໂທດບາບນັ້ນແທນເຮົາ.*

**11** ໃນ ໂລມ ບົດທີ 4 ແລະ 5 ໂປໂລຍົກຕົວຢ່າງສອງຄົນຈາກພະຄຳພີເດີມເພື່ອຈະອະທິບາຍເລື່ອງພະຄຸນຂອງພະອົງນີ້.

ກ. ໃນໂລມ 4:3 ໂປໂລຍົກໃຜມາເປັນຕົວຢ່າງ? ______________________________

ຂ. ອັບລາຮາມໄດ້ເຊື່ອໃນພະເຈົ້າ ແລະ ພະເຈົ້າຖືວ່າຄວາມເຊື່ອນັ້ນເປັນຢ່າງໃດ?

______________________________

ຄ. ອັບລາຮາມເຮັດຢ່າງໃດ ພະເຈົ້າຈຶ່ງຖືວ່າເປັນຄວາມຊອບທຳ? __________________

**12** ກ. ຕະຫຼອດບົດທີ 4 ກ່າວເລື່ອງອັບລາຮາມທີ່ເປັນຕົວຢ່າງແກ່ເຮົາ. ຄວາມເຊື່ອຂອງອັບລາຮາມນັ້ນພະເຈົ້າຊົງຖືວ່າ ເປັນຢ່າງໃດ? (ໂລມ 4:22) ____________________

ຂ. ທີ່ພະອົງຊົງຖືວ່າຄວາມເຊື່ອເປັນຄວາມຊອບທຳ ບໍ່ແມ່ນແຕ່ອັບລາຮາມຜູ້ດຽວ ແຕ່ເປັນຄວາມຊອບທຳຂອງພວກໃດ ອີກ? (ໂລມ 4:24) ________________________

**13** ກ. ໂລມ ບົດທີ 4 ຍົກຄວາມປຽບທຽບທີ່ຄ້າຍຄືກັນ, ຄືໃຜເປັນຕົວຢ່າງແກ່ເຮົາທີ່ເຊື່ອໃນພະເຈົ້າຈຶ່ງຊົງຖືວ່າເປັນ ຄົນຊອບທຳ? ________________________________________

ຂ. ໂລມ ບົດທີ 5 ຍົກຄວາມປຽບທຽບທີ່ແຕກຕ່າງກັນລະຫວ່າງພະເຢຊູກັບໃຜອີກ? (ໂລມ 5:14-15) ________________________________________________

**14** ໃຫ້ອ່ານໃນ ໂລມ 5:15 ອີກ.

ກ. ຄົນຈຳນວນຫຼວງຫຼາຍຕ້ອງຕາຍເພາະການລະເມີດຂອງໃຜ? ___________________

ຂ. ພະຄຸນທີ່ມີບໍລິບູນແກ່ຄົນຈຳນວນຫຼາຍມາທາງໃຜ? __________________________

ຄ. ແມ່ນເພາະການລະເມີດເທື່ອດຽວທີ່ຄົນທັງປວງຖືກຫຍັງ? (ໂລມ 5:18) ____________

ງ. ແມ່ນເພາະການຊົງກະທຳອັນຊອບທຳເທື່ອດຽວທີ່ນຳການ __________ ແລະ _______ ມາເຖິງຄົນ ທັງປວງ. (ໃຫ້ຕື່ມຄວາມທີ່ຂາດ)

**15** ມະນຸດຊາດທັງປວງຕົກໃນບາບຍ້ອນອາດາມເຮັດບາບ ເຊັ່ນດຽວກັນກັບມະນຸດຊາດທັງປວງທີ່ເຊື່ອ ຈະໄດ້ລອດໂດຍການ ກະທຳຂອງພະເຢຊູ. ພວກເທວະດາບໍ່ເອົາກັນເປັນຜົວເປັນເມຍ (ມທ 22:30) ແລະ ບໍ່ມີລູກ. ແຕ່ມະນຸດເຮົາ ບໍ່ເປັນຢ່າງນັ້ນ, ເຮົາເອົາກັນເປັນຜົວເປັນເມຍ ແລ້ວເກີດມີລູກ. ລູກນັ້ນຖ່າຍທອດເຊື້ອສາຍຈາກພໍ່ແມ່ ຄື ລູກຄົນລາວ ກໍເປັນລາວ ລູກຄົນຈີນກໍເປັນຄົນຈີນ ເຊັ່ນດຽວກັນລູກຄົນບາບກໍເປັນຄົນບາບ ອາດາມເປັນພໍ່ເດີມຂອງເຮົາທຸກຄົນ ແລະ ເປັນຄົນບາບ ພວກເຮົາທຸກຄົນກໍຖ່າຍທອດເຊື້ອສາຍຂອງອາດາມ, ດັ່ງນັ້ນເຮົາທຸກຄົນເປັນຄົນບາບ ພວກເທວະດາບໍ່ໄດ້ ເກີດຈາກພໍ່ແມ່ ພະເຈົ້າຊົງສ້າງເພິ່ນເປັນອົງໆ. ດັ່ງນັ້ນເທວະດາອົງໃດທີ່ເລືອກກະບົດຕໍ່ພະເຈົ້າກໍຕົກໃນບາບ ແຕ່ອົງໃດ ທີ່ບໍ່ຜິດຕໍ່ພະເຈົ້າບໍ່ມີບາບ, ເພາະບໍ່ໄດ້ເກີດໃນຄວາມບາບ. ພວກເທວະດາເໝືອນຢ່າງຕົ້ນໄມ້ ຕົ້ນໃດທີ່ຕັ້ງໝັ້ນກໍຍັງ ຢືນຢູ່ ແລະຕົ້ນໃດທີ່ບໍ່ຕັ້ງໝັ້ນກໍລົ້ມລົງ.

ກ. ຮູບໃດ ຕໍ່ໄປນີ້ ສະແດງເຖິງເທວະດາ ທີ່ບໍ່ຕັ້ງໝັ້ນໃນພະເຈົ້າ? ___________________



ແຕ່ມະນຸດເຮົາບໍ່ເປັນຢ່າງນັ້ນ ພວກເຮົາເກີດມີມາຈາກເຊື້ອສາຍດຽວກັນ. ເໝືອນຢ່າງກັບກິ່ງຫຼາຍກິ່ງທີ່ເກີດມາ ຈາກລຳຕົ້ນດຽວ ຄື ເກີດມາຈາກອາດາມ.

ຂ. ທີ່ມະນຸດຊາດທຸກຄົນລົ້ມລົງໃນບາບຍ້ອນພໍ່ເດີມ ຄື ອາດາມລົ້ມລົງໃນບາບນັ້ນ, ສະແດງໃນຮູບໃດ? ____________________

ຄ. ຮູບໃດ ສະແດງເຖິງຄວາມຕັ້ງໃຈເປັນຄົນຊອບທຳໂດຍພະເຢຊູ? ____________________




ງ




ຈ

**16** ໃຫ້ເປີດອ່ານ ໂລມ 5:18-19. ແລ້ວສັງເກດຮູບຕົ້ນໄມ້ນັ້ນດ້ວຍ.

ກ. ຄົນຈຳນວນໃດ ຖືກພິພາກສາຍ້ອນການລະເມີດຂອງອາດາມ? (ໂລມ 5:18) ____________________

ຂ. ເຊັ່ນດຽວກັນ ຄົນຈຳນວນໃດ ທີ່ເຊື່ອໃນພະເຢຊູຈະໄດ້ຮັບການປົດປ່ອຍແລະຊີວິດໄດ້?

____________________

ຄ. ຄົນຈຳນວນຫຼາຍຕົກເປັນຄົນຢ່າງໃດ ເພາະມະນຸດຄົນດຽວບໍ່ເຊື່ອຟັງ? (ໂລມ 5:19) ____________________

ງ. ຄົນຈຳນວນຫຼາຍຈະໄດ້ຊົງຖືວ່າເປັນຄົນຢ່າງໃດ ເພາະພະອົງຜູ້ດຽວທີ່ເຊື່ອຟັງ?

____________________

**17** ສະຫລູບເລື່ອງໃນ ໂລມ ບົດທີ 1 ເຖິງ 5. ເຫັນວ່າບົດທີ 1, 2 ແລະ 3. ສອນເລື່ອງຄວາມບາບຂອງທຸກຄົນໃນໂລກທັງຊາດຢິວແລະຄົນຕ່າງຊາດ. ບົດທີ 4 ແລະ 5 ສອນເລື່ອງຄວາມຊອບທຳທີ່ໄດ້ມາໂດຍຄວາມເຊື່ອໃນພະເຢຊູ.

ກ. ບົດທີ 4 ຍົກຄົນໃດ ໃນພະຄຳພີເດີມເປັນຕົວຢ່າງໃນຄວາມເຊື່ອ? ____________________

ຂ. ບົດທີ 5 ຍົກຄົນໃດ ໃນພະຄຳພີເດີມທີ່ເຮັດໃຫ້ມະນຸດຊາດທີ່ຕົກໃນຄວາມບາບ? ______

## ການດຳເນີນຊີວິດຕາມຄວາມຊອບທຳ

(ໂລມ ບົດ 6 ເຖິງ 8)

**18** ຈະຖືວ່າເປັນຄົນຊອບທຳໂດຍຄວາມເຊື່ອນັ້ນ ສົມຄວນ ຫຼື ບໍ່! ຜູ້ທີ່ກະທຳດີກໍຈະຮັບຜົນຄືຄວາມດີ ແຕ່ກໍບໍ່ຖືວ່າຜົນຂອງຄວາມດີທີ່ຕົນເຮັດນັ້ນເປັນຄວາມຊອບທຳ. ສ່ວນຜູ້ທີ່ໄວ້ວາງໃຈໃນພະອົງ ຄວາມເຊື່ອຂອງຄົນນັ້ນກໍຊົງຖືວ່າເປັນຄວາມຊອບທຳໄດ້. (ໂລມ 4:4-5)
ຖ້າມີແຕ່ການປະຕິບັດຢ່າງດຽວໂດຍບໍ່ມີຄວາມເຊື່ອ ຈະຍັງເປັນຄົນບາບທຸກຄົນ.

ກ. ໂປໂລຍົກເລື່ອງບັນຫານີ້ໃນ ໂລມ 6:1. "ຖ້າຢ່າງນັ້ນແລ້ວພວກເຮົາຈະວ່າຢ່າງໃດ ຄວນທີ່ເຮົາທັງຫຼາຍຈະຢູ່ໃນຄວາມ _______ ຕໍ່ໄປ ເພື່ອໃຫ້ພະຄຸນມີຫຼາຍຂຶ້ນຫລື". (ຕື່ມຄວາມ)

ຂ. ແນ່ນອນ ເຮົາບໍ່ຄວນຈະຢູ່ໃນຄວາມຜິດບາບດອກ! ໃນໂລມ 6:2 ໂປໂລຕອບຢ່າງນີ້ "ບໍ່ ___________ດອກ" ຖ້າເຮົາມອບຕົວໃຫ້ພະເຈົ້າ ເຮົາຈະບໍ່ຮັບໃຊ້ພະຍາມານ. (ຕື່ມ)

**19** ເຮົາຂອບໃຈນຳພະເຈົ້າທີ່ພະອົງຊົງຖືວ່າເຮົາເປັນຄົນຊອບທຳໂດຍທາງຄວາມເຊື່ອ ດັ່ງນັ້ນຕໍ່ໄປເຮົາຈະດຳເນີນຊີວິດ ຢ່າງຊອບທຳເຊັ່ນດຽວກັນ.
ໃນ ໂລມ ບົດທີ 4 ແລະ 5 ຮຽນເລື່ອງການຊົງຖືວ່າເຮົາເປັນຄົນຊອບທຳ.
ໃນ ໂລມ ບົດທີ 6 ເຖິງ 8 ເຫັນວ່າເຮົາຈະກາຍເປັນຄົນທີ່ດຳເນີນຊີວິດຢ່າງຄົນຊອບທຳ.

ກ. ພະເຈົ້າຊົງຖືວ່າ ເຮົາເປັນຄົນ _________ ໂດຍທາງຄວາມເຊື່ອ. (ໃຫ້ຕື່ມຄວາມທີ່ຂາດ)

ຂ. ຈາກນັ້ນເຮົາຈຶ່ງປະຕິບັດຊີວິດ ຢ່າງເປັນຄົນ ______________ . (ໃຫ້ຕື່ມຄວາມທີ່ຂາດ)

*ໃນໂລມ ບົດທີ 6, 7 ແລະ 8. ໂປໂລຍົກຕົວຢ່າງ 3 ປະການທີ່ຊາວໂກລົນໂທສະໄໝນັ້ນໃຫ້ຮູ້ຈັກດີ ໆ ຄື:*

- *ຍົກເລື່ອງການຮັບບັບຕິສະມາເປັນຂໍ້ປຽບທຽບ (ໂລມ 6:1-14)*
- *ຍົກເລື່ອງການເປັນຂ້ອຍຂ້າເປັນຂໍ້ປຽບທຽບ (ໂລມ 6:15-23)*
- *ຍົກເລື່ອງການແຕ່ງງານມາເປັນຂໍ້ປຽບທຽບ (ໂລມ ບົດທີ 7)*

## ຍົກບັບຕິສະມາເປັນຂໍ້ປຽບທຽບ

(ໂລມ 6:1-14)

**20** ກ. ພວກເຮົາທຸກຄົນທີ່ໄດ້ຮັບບັບຕິດສະມາໄດ້ເຂົ້າໃນໃຜ? (ໂລມ 6:3) _______________

ຂ. ເຮົາເຂົ້າຕິດສະນິດກັບພະອົງໃນການຫຍັງ? (ໂລມ 6:5) ______________________

ຄ. ເຮົາຈະເຂົ້າສະນິດກັບພະອົງໃນການຊົງຖືກບັນດານໃຫ້ເປັນຄືນມາຢ່າງໃຜ? ________

ງ. ລັກສະນະຄົນເກົ່າຂອງພວກເຮົາຖືກຫຍັງ? (ໂລມ 6:6) ______________________

ຈ. ພະອົງຊົງຄືນພະຊົນແລ້ວໂດຍລິດເດດອັນຮຸ່ງເຮືອງຂອງພະບິດາ ເຮົາຈະໄດ້ດຳເນີນຕາມຊີວິດຢ່າງໃດ? (ໂລມ 6:4) ________________________________________

ສ. ເຮົາມີຊີວິດເພື່ອພະເຈົ້າໃນໃຜ? (ໂລມ 6:11) __________________________

ຊ. ເຮົາຈຶ່ງມອບຫຍັງ ຖະຫວາຍແກ່ພະເຈົ້າເປັນການສິ້ນສຸດ ເພື່ອເປັນເຄື່ອງໃຊ້ໃນການຊອບທຳຕໍ່ໄປ? (ໂລມ 6:13) ______________________________________

## ຍົກການເປັນຂ້ອຍຂ້າມາເປັນຂໍ້ປຽບທຽບ

(ໂລມ 6:15-23)

*ໃນ ໂລມ 6:15 ໂປໂລຍົກຄຳຖາມວ່າ "... ຈະພາກັນເຮັດຜິດບາບເພາະບໍ່ຢູ່ໃຕ້ພະບັນຍັດ ແຕ່ຢູ່ໃຕ້ ພະຄຸນຢ່າງນັ້ນຫຼື ບໍ່ແມ່ນຢ່າງນັ້ນດອກ"*

**21** ຖ້າເຮົາເປັນລູກນ້ອງຂອງເຈົ້ານາຍຜູ້ນີ້ ເຮົາຈະຟັງຄວາມເຂົາ ແຕ່ຖ້າເຮົາປ່ຽນເປັນລູກນ້ອງຂອງເຈົ້ານາຍຜູ້ໃໝ່ ເຮົາກໍຈະບໍ່ໄດ້ຟັງຄວາມຂອງເຈົ້ານາຍຜູ້ເກົ່າອີກຕໍ່ໄປ.

ກ. ພະເຢຊູບອກວ່າ "ບໍ່ມີຜູ້ໃດສາມາດເປັນ________________ສອງເຈົ້າບ່າວສອງນາຍໄດ້. (ໃນ ມທ 6:24 ແລ້ວຕື່ມຄວາມດ)

ຂ. ເຂົາເຄີຍມອບອະໄວຍະວະເປັນຂ້ອຍຂ້າຂອງຫຍັງ? (ໂລມ 6:19)

____________________________ ແລະ ______________________________

ຄ. ບັດນີ້ຈຶ່ງມອບອະໄວຍະວະເປັນຂ້ອຍຂ້າຂອງຫຍັງ? __________________________

*ບໍ່ແມ່ນພຽງແຕ່ພະເຈົ້າຊົງຖືວ່າເຮົາເປັນຄົນຊອບທຳ ແຕ່ເຮົາຈຶ່ງມອບອະໄວຍະວະໃຫ້ພະເຈົ້າ ຈຶ່ງຈະເອີ້ນໄດ້ວ່າ ປະຕິບັດຕາມຄວາມຊອບທຳນັ້ນ.*

## ຍົກການແຕ່ງງານເປັນຂໍ້ປຽບທຽບ

(ໂລມ ບົດ 7)

**22** ກ. ຕໍ່ໄປສິ່ງໃດຈະບໍ່ບັງຄັບເຮົາ? (ໂລມ 6:14) ______________________________

ຂ. ເພາະບໍ່ໄດ້ຢູ່ໃຕ້ຫຍັງ? ____________________________________________

ຄ. ແຕ່ຢູ່ໃຕ້ຫຍັງ? ___________________________________________________

*ຊາວຢິວເຄີຍຖືວ່າເຂົາຮັບການຜູກມັດຢູ່ໃຕ້ພະບັນຍັດ ຄ້າຍຄືກັບເມຍທີ່ຜູກມັດໄວ້ກັບຜົວ. ຖ້າເຂົາມາເຊື່ອ ໃນພະເຢຊູ ເຂົາກໍຮັບການຜູກມັດໄວ້ກັບພະອົງ ຈຶ່ງຫ່ວງວ່າການຖືກຜູກມັດໄວ້ກັບສອງຝ່າຍໃນເວລາດຽວກັນ ຄ້າຍຄືກັບຜູ້ຍິງທີ່ມີຜົວແຕ່ຍອມເປັນຂອງຊາຍອື່ນໃນເມື່ອຜົວຍັງມີຊີວິດຢູ່. ໂປໂລຕອບເລື່ອງນີ້ໃນ ໂລມບົດ 7.*

**23** ໂປໂລຍົກຕົວຢ່າງຈາກການເປັນຜົວເມຍກັນ.

ກ. ຖ້າຍິງໃດຍອມເປັນຂອງຊາຍອື່ນໃນເມື່ອຜົວຍັງມີຊີວິດຢູ່ ຍິງນັ້ນກໍໄດ້ຊື່ວ່າເປັນຍິງຢ່າງໃດ? (ໂລມ 7:3)_____________________________________________________

ຂ. ຖ້າຜົວຕາຍແລ້ວ ຍິງນັ້ນຈະພົ້ນຈາກກົດລະບຽບລະຫວ່າງຜົວເມຍ ແລ້ວມີສິດເສລີພາບໃນຫຍັງ? ______________________________________________________

ຄ. ຈະເປັນຄຣິດສະຕຽນຊາດຢິວກໍຕາມ ເຂົາໄດ້ພົ້ນຈາກຫຍັງ? (ໂລມ 7:6) ___________

ງ. ຄຣິດສະຕຽນນັ້ນໄດ້ຕາຍຈາກສິ່ງໃດ ຈາກເມື່ອກ່ອນ? ________________________

ຈ. ບໍ່ໄດ້ບົວລະບັດຕາມຢ່າງໃດ? _______________________________________

ສ. ແຕ່ຈະໄດ້ບົວລະບັດຕາມຢ່າງໃໝ່ ຄື ຕາມລັກສະນະໃດ? ____________________

*ຖ້າຜົວຕາຍໄປ ເມຍຈະເອົາຜົວໃໝ່ກໍໄດ້. ແຕ່ຖ້າເຮົາຕາຍຈາກພະບັນຍັດແລ້ວ ເຮົາກໍຈະເຮັດເອົາຕາມ ພະຄຸນໄດ້.*

**24** ໂລມ ບົດທີ 6 ແລະ 7. ຍົກຕົວຢ່າງ 3 ປະການ ທີ່ສະແດງເຖິງການດຳເນີນຊີວິດຕາມຄວາມຊອບທຳ. ໃຫ້ຈົດໄວ້ທັງ 3 ປະການ.

________________________

________________________

________________________

**25** ສະຫລູບໃນ ໂລມ ບົດທີ 8

ກ. ບໍ່ມີໂທດແກ່ຄົນຢ່າງໃດ? (ໂລມ 8:1) ______________________________

ຂ. ຜູ້ທີ່ມີພະວິນຍານບໍລິສຸດ ສະແດງວ່າຢູ່ຝ່າຍໃດ? (ໂລມ 8:9) ________________

**26** ທວນຄືນ. ໂລມ ບົດທີ 1 ເຖິງ 8. ແບ່ງເປັນ 3 ພາກໄດ້ດັ່ງຕໍ່ໄປນີ້: (ໃຫ້ຕື່ມຄວາມທີ່ຂາດ)

ກ. ບໍ່ມີ ________________________________________ (ບົດ ____ - ____ )

ຂ. ແຕ່ຍັງຊົງຖືວ່າ _________________________________ (ບົດ ____ - ____ )

ຄ. ຍົກ __________________ ມາປຽບທຽບ ໃນບົດທີ 4

ງ. ຍົກ __________________ ມາປຽບທຽບ ໃນບົດທີ 5

ຈ. ການດຳເນີນ ___________________________________ (ບົດ ____ - ____ )

ສ. ຍົກ __________________ ມາປຽບທຽບ ໃນ ໂລມ 6:1-14.

ຊ. ຍົກ __________________ ມາປຽບທຽບ ໃນ ໂລມ 6:15-23.

ຍ. ຍົກ __________________ ມາປຽບທຽບ ໃນ ໂລມ ບົດທີ 7

ໃຫ້ອ່ານອອກສຽງໃນ ໂລມ ບົດທີ 8 ທັງໝົດບົດ ທີ່ເປັນຄວາມສະຫລູບ.

*ຢ່າລືມບົດເສັງ!*

ຕອບ:

**1** *ໂກລົບໂທ.*

**2** *ກ. ຂ່າວປະເສີດ. ຂ. ຄວາມຊົ່ວຮ້າຍທຸກຢ່າງຂອງມະນຸດ. ຄ. ຄວາມຈິງ.*

**3** *ກ. ການນະມັດສະການຮູບ. ຂ. ການຮັກຮ່ວມເພດດຽວກັນ.*
*ຄ. ການທຳຮ້າຍທຸກຢ່າງ.*

**4** *ກ. ຍິວ. ຂ. ພະບັນຍັດ. ຄ. ມີພະເຈົ້າ.*

ຕອບ (ຕໍ່):

**5** *ກ. ບໍ່ມີຂໍ້ທີ່ຈະແກ້ຕົວໄດ້.*

*ຂ. ເພາະເມື່ອເຂົາກ່າວໂທດໃສ່ຜູ້ອື່ນນັ້ນເຂົາກໍກ່າວໃສ່ຕົນເອງ.*

*ຄ. ເຮັດຢ່າງດຽວກັນກັບເຂົາ.*

*ງ. ພະບັນຍັດ.*

*ຈ. ຢິວ.*

**6** *ເໝືອນບໍ່ໄດ້ຮັບ.*

**7** *ກ. ຄົນຢິວແລະຄົນຕ່າງຊາດ.    ຂ. ເຮັດຜິດບາບ.*

**8** *ກ. ອາໄສຄວາມເຊື່ອໃນພະຄຣິດ.    ຂ. ຄົນຕ່າງຊາດ.    ຄ. ຄົນຢິວ.    ງ. ທຸກຄົນ (ທັງຄົນຕ່າງຊາດແລະຄົນຢິວ)*

**9** *ກ. ໂລມ ບົດ 1, 2 ແລະ 3.    ຂ. ພະບັນຍັດ.    ຄ. ຄວາມບາບ.*

**10** *ກ. ພະເຈົ້າ.    ຂ. ນອກຈາກພະບັນຍັດ.    ຄ. ຜູ້ທີ່ເຊື່ອທຸກຄົນ.*

*ງ. ໃນພະເຢຊູຄຣິດ.    ຈ. ທີ່ບໍ່ຄິດຄ່າ.    ສ. ຂອງພະອົງ (ພະເຢຊູ).*

**11** *ກ. ອັບລາຮາມ.    ຂ. ເປັນຄວາມຊອບທຳ.    ຄ. ເຊື່ອພະເຈົ້າ.*

**12** *ກ. ຄວາມຊອບທຳ.*

*ຂ. ພວກເຮົາທີ່ເຊື່ອດ້ວຍ.*

**13** *ກ. ອັບລາຮາມ.    ຂ. ອາດາມ.*

**14** *ກ. ອາດາມ.*

*ຂ. ພະເຢຊູ.*

*ຄ. ຖືກພິພາກສາລົງໂທດ.*

*ງ. ປົດປ່ອຍແລະຊີວິດ.*

**15** *ກ. ຮູບ (ຄ).    ຂ. ຮູບ (ງ).    ຄ. ຮູບ (ຈ).*

**16** *ກ. ຄົນທັງປວງ.    ຂ. ຄົນທັງປວງ.    ຄ. ຕົກເປັນຄົນຜິດບາບ.*

*ງ. ຖືວ່າເປັນຄົນຊອບທຳ.*

**17** *ກ. ອັບລາຮາມ.    ຂ. ອາດາມ.*

**18** *ກ. ຜິດບາບ.    ຂ. ບໍ່ເປັນຢ່າງນັ້ນ.*

**19** *ກ. ຊອບທຳ.    ຂ. ຊອບທຳ.*

**20** *ກ. ເຂົ້າໃນພະເຢຊູຄຣິດ.    ຂ. ໃນການຕາຍຢ່າງພະອົງ.    ຄ. ຢ່າງພະອົງ.*

*ງ. ຖືກຄຶງໄວ້ກັບພະອົງ.    ຈ. ຊີວິດໃໝ່.    ສ. ໃນພະເຢຊູຄຣິດ.*

*ຊ. ມອບອະໄວຍະວະຂອງເຮົາ.*

**21** *ກ. ຂ້າ.    ຂ. ຄວາມຊົ່ວມົວໝອງແລະການອະທຳ.    ຄ. ຄວາມຊອບທຳ.*

**22** *ກ. ຄວາມຜິດບາບ.    ຂ. ໃຕ້ພະບັນຍັດ.    ຄ. ໃຕ້ພະຄຸນ.*

ຕອບ (ຕໍ່):

**23** *ກ. ຍິ່ງຫຼົ້ນຊູ້. ຂ. ແຕ່ງງານໃໝ່ໄດ້. ຄ. ຈາກພະບັນຍັດ.*
*ງ. ສິ່ງທີ່ເຄີຍຜູກມັດເຮົາໄວ້. ຈ. ຕາມຢ່າງເກົ່າ. ສ. ລັກສະນະພະວິນຍານ*

**24** *ບັບຕິສະມາ. ການເປັນຂ້ອຍຂ້າ. ການແຕ່ງງານ.*

**25** *ກ. ຄົນທີ່ຢູ່ໃນພະເຢຊູຄຣິດ. ຂ. ພະເຈົ້າ.*

**26** *ກ. ຄົນຊອບທຳຈັກຄົນ (ບົດ 1-3). ຂ. ເປັນຄົນຊອບທຳໄດ້ (ບົດ 4-5).*
*ຄ. ອັບລາຮາມ. ງ. ອາດາມ. ຈ. ຊີວິດຕາມຄວາມຊອບທຳ (ບົດ 6-8).*
*ສ. ຍົກບັບຕິສະມາ. ຊ. ຍົກການເປັນຂ້ອຍຂ້າ. ຍ. ຍົກການແຕ່ງງານ.*

## ໃນການປະຊຸມບົດທີ 4

# ການວາງແຜນການປະກາດຂ່າວປະເສີດ

(ໂລມ ບົດທີ 10)

*ອາຈານໂປໂລເປັນຄົນດຸໝັ່ນຫຼາຍໃນການປະກາດຂ່າວປະເສີດ.*
*ເພິ່ນປະກາດຈາກກຸງເຢລູຊາເລັມ ໄປເຖິງແຂວງອີລີລີກົນ ແຕ່ບໍ່ທັນໄດ້ເລີ້ກເທື່ອ.*
*ເພິ່ນຈະປະກາດຕໍ່ໄປເລື້ອຍໆ ຈົນເຖິງວັນລັບຕາລາໂລກ.*

**1** ໃຫ້ອ່ານພະທຳ ໂລມ 10:13-15 ທີ່ສອນເລື່ອງບາດກ້າວໃນການອອກໄປປະກາດພະທຳຕາມລຳດັບ.

(4) ກ່ອນຈະທູນຂໍຕໍ່ພະອົງ ຈະຕ້ອງເຊື່ອ.
(3) ກ່ອນຈະເຊື່ອໃນພະອົງ ຈະຕ້ອງໄດ້ຍິນ.
(2) ກ່ອນຈະໄດ້ຍິນ ຈະຕ້ອງມີຜູ້ປະກາດໃຫ້ຟັງ.
(1) ກ່ອນຈະມີຜູ້ປະກາດໄປ ຈະຕ້ອງມີຜູ້ໃຊ້ເຂົາໄປ.

ໂປໂລສະເໜີມາໃນລຳດັບຈາກປາຍເຖິງຕົ້ນ. ຖ້າສະເໜີຈາກຕົ້ນເຖິງປາຍຈະໄດ້ລຳດັບຢ່າງນີ້:

(1) ຄຼິດສະຕະຈັກໃຊ້ຜູ້ປະກາດໄປ.
(2) ຜູ້ປະກາດກ່າວໃຫ້ເຂົາໄດ້ຍິນ.
(3) ຜູ້ໄດ້ຍິນຈະເຊື່ອໄດ້.
(4) ຜູ້ທີ່ເຊື່ອຈະທູນຂໍຕໍ່ພະອົງ.

ກ. ຜູ້ທີ່ເຊື່ອກໍເຊື່ອດ້ວຍຫຍັງ? (ໂລມ 10:10) ______________________________
ຂ. ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍຫຍັງ? ______________________________
ຄ. ຜູ້ປະກາດໃຊ້ຫຍັງໄປປະກາດ? (ໂລມ 10:15) ___________________________
ງ. ຜູ້ປະກາດໃຊ້ຕີນນຳຫຍັງມາ? _______________________________________
ຈ. ຄຳເວົ້ານັ້ນ ຍົກມາຈາກບົດແລະຂໍ້ໃດ ໃນພະຄຳພີເດີມ? _____________________

*ຜູ້ປະກາດພະທຳຈຳເປັນຕ້ອງອອກໄປຫາເຂົາ ບໍ່ແມ່ນທີ່ຈະລໍຖ້າໃຫ້ເຂົາມາຫາ.*
*ໂປໂລອອກໄປປະກາດຢູ່ສະເໝີ.*

**2** ໂປໂລເຮັດຕາມຄຳສັ່ງຂອງພະເຢຊູ ໃນ ມທ 28:18-19.

ກ. ໃນ ມທ 28:18-19 ເຫັນຄຳວ່າ "ຈົ່ງ" ຈັກເທື່ອ? ___________________________
ຂ. ເທື່ອທຳອິດຈົ່ງເຮັດຫຍັງ? __________________________________________
ຄ. ໃນ ມລກ 4:3 ຜູ້ຫ່ວານພືດກ່າວວ່າ "ມີຄົນໜຶ່ງ ________ ຫວ່ານພືດ. (ຕື່ມຄວາມທີ່ຂາດ)

**3** ໃນ ໂລມ 10:15 ຖ້າຄຼິດສະຕະຈັກຈະໃຊ້ໄປ ຜູ້ປະກາດຮັບພາລະເຮັດຫຍັງ? __________

*ຖ້າພະເຈົ້າແລະພີ່ນ້ອງຈະໃຊ້ໄປ ຈຳເປັນຕ້ອງອອກໄປ.*

**4** ໃນ ໂລມ 15:20. ໂປໂລຕັ້ງເປົ້າໝາຍວ່າ ຈະປະກາດຂ່າວປະເສີດບ່ອນໃດ?

____________________________________________________________

| ໃຫ້ອ່ານ 2 ໂກລິນໂທ 10:16 ດ້ວຍ |
|---|

**5** ໂປໂລຕັ້ງໃຈຈະປະກາດພະທຳໃນບ່ອນທີ່ບໍ່ມີໃຜຫວ່ານພືດກ່ອນ.

ກ. ໃນ 1 ກລທ 3:6 ໂປໂລເຮັດຫຍັງກ່ອນ? ________________________________

ຂ. ອາໂປໂລເຮັດຫຍັງ? ____________________________________________

ຄ. ການປະກາດປຽບທຽບກັບການປູກ ຫຼື ການຫົດນ້ຳ? ________________________

ງ. ການສອນຜູ້ເຊື່ອໃໝ່ ປຽບທຽບກັບຫຍັງ? ________________________________

| ໃຫ້ທ່ານຂີດກ້ອງ 1 ໂກລິນໂທ 3:6 ໝົດທັງຂໍ້ນັ້ນ. |
|---|

**6** ໂປໂລຫວ່ານພືດຢູ່ບໍ່ເຊົາ ທັງຫົດນ້ຳຢູ່ບໍ່ເຊົາຄືກັນ.

ກ. ໃນ ກຈກ 19:8-10 ໂປໂລຫວ່ານພືດ ຫຼື ຫົດນ້ຳ? _________________________

ຂ. ໃນ ກຈກ 20:31-32. ເດ້! ເຮັດຫຍັງ? __________________________________

**7** ແຜນການຂອງໂປໂລເກີດມີຜົນຢູ່ໃນຄຼິດສະຕະຈັກເອເຟໂຊ.

ກ. ໃນ ກຈກ 19:10 ເຫັນວ່າຂ່າວປະເສີດແຜ່ອອກໄປເຖິງຂະໜາດໃດ? _____________

__________________________________________________________

__________________________________________________________

ຂ. ໃນ ກຈກ 19:11-20 ເຫັນອຳນາດຂອງພະເຈົ້າຢ່າງໃດ? (ສະຫລູບເລື່ອງ) _________

__________________________________________________________

__________________________________________________________

ຄ. ມີຜົນຢ່າງໃດດ້ານເສດຖະກິດຂອງແຂວງ? (ກຈກ 19:21-41) _________________

__________________________________________________________

__________________________________________________________

**8** ເຫັນວ່າຈຸດປະສົງຂອງໂປໂລ ຄື ຕັ້ງຄຼິດສະຕະຈັກໄວ້ ແລ້ວຈະສອນຄົນໃນຄຼິດສະຕະຈັກເຫຼົ່ານັ້ນໄປເລື້ອຍ ໆ. ເຮັດຢ່າງນັ້ນຄຼິດສະຕະຈັກຈະກ້າວໜ້າດີ ແລະສັງຄົມທົ່ວໄປຈະຮັບຮູ້ເລື່ອງສິນລະທຳ.

ໃຫ້ອ່ານ ໂລມ 12:1-8.

ກ. ພາລະຮັບໃຊ້ພະເຈົ້າຢ່າງໜຶ່ງຢ່າງໃດ ຈະຂຶ້ນຢູ່ກັບພີ່ນ້ອງຄຼິດສະຕຽນທຸກຄົນ ຫຼື ເປັນພາລະຂອງຜູ້ນຳຢ່າງດຽວ? ______________________

ຂ. ຄຼິດສະຕຽນແຕ່ລະຄົນນັ້ນ ມີຂອງພາລາດຊະທານອັນດຽວກັນ ຫຼືຕ່າງຄົນຕ່າງມີຂອງພະລາດຊະທານ? ______________________

| ໃຫ້ອ່ານ ເອເຟໂຊ 4:11-16 ແລະ 1 ໂກລິນໂທ 12:12-30 ດ້ວຍ. |
| --- |

**9** ໃນ ມທ 28:18-20. ພະເຢຊູສັ່ງໃຫ້ລູກສິດໄປປະກາດຂ່າວປະເສີດ.

ກ. ທີ່ວ່າ "ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິດສະມາໃນພະນາມແຫ່ງພະບິດາພະບຸດ ແລະ ພະວິນຍານບໍລິສຸດ".
ຄວາມນັ້ນປຽບທຽບກັບການປູກ ຫຼື ການຫົດນ້ຳ? ______________________

ຂ. ທີ່ວ່າ "ສັ່ງສອນເຂົາໃຫ້ຖືຮັກສາສາລະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ".
ອ້າງເຖິງການປູກ ຫຼື ການຫົດນ້ຳ? ______________________

ການປະກາດຂອງໂປໂລປະກອບໂດຍສອງສ່ວນ ຄື:

- ການປະກາດຂ່າວປະເສີດ (ປູກ)
- ການສັ່ງສອນ (ຫົດນ້ຳ)

## ການປະກາດຂ່າວປະເສີດ (ປູກ)

**10** ເມັດທີ່ປູກນັ້ນຄືຂ່າວປະເສີດ. ມີຢູ່ບາງເທື່ອທີ່ເຮົາ ຢ້ານທີ່ຈະກ່າວເລື່ອງຂ່າວປະເສີດ, ໂປໂລກໍຢ້ານ.



ກ. ໃນ 1 ກລທ 2:3 ເຫັນວ່າໂປໂລຢ້ານຈົນຫຍັງ?

______________________

ຂ. ເຖິງຈະຢ້ານກໍຕາມເພິ່ນຍັງປະກາດຂ່າວປະເສີດຢູ່.
ໂດຍອາໃສລິດເດດຂອງໃຜ?
(ໂລມ 1:16) ______________________

*ມີວິທີທາງຫຼາຍຢ່າງທີ່ຈະປ່າວປະກາດຂ່າວປະເສີດ ຄື ໃບປິວ,ການຍົກກ່າວເລື່ອງຈາກໃນພະຄຳພີ ແລະໃຫ້ເຂົາຟັງຂ່າວປະເສີດທາງວິທະຍຸ ໆລໆ.*

## ການສັ່ງສອນພະທຳ (ທົດນ້ຳ)

**11** ເມັດທີ່ເຮົາປູກທຸກເມັດຕ້ອງການນ້ຳ ເຊັ່ນດຽວກັນກັບທຸກຄົນທີ່ຮັບເຊື່ອໄວ້ວາງໃຈໃນພະເຢຊູ ຕ້ອງການໃຫ້ມີຜູ້ສອນເຂົາ ຜູ້ດູແລເຂົາແລະໜຸນໃຈເຂົາ ແມ່ນໃຜສັ່ງສອນຄຣິດສະຕຽນໃໝ່ໃນເມືອງໂກລິນໂທ? (1 ກລທ 3:6) ___________________________



*ຖ້າເຮົາປະກາດຂ່າວປະເສີດເລື້ອຍໄປ ເຮົາຕ້ອງສອນຜູ້ທີ່ຮັບເຊື່ອເລື້ອຍ ໆ ດ້ວຍ. ມີຫຼັກສູດ ສ.ອ.ນ. ຊະເພາະຜູ້ທີ່ເຊື່ອໃໝ່ຄື "ຊີວິດຄົບບໍລິບູນ". ຖ້າທ່ານຢາກໃຊ້ຫຼັກສູດນັ້ນສອນຜູ້ທີ່ເຊື່ອໃໝ່ ໃຫ້ຂໍເອົາຈາກຜູ້ກວດກາ ພາກ ສ.ອ.ນ.*

| ໃຫ້ອ່ານ ມັດທາຍ 28:18-20. ແລ້ວໃຫ້ຂີດກ້ອງຄຳດັ່ງຕໍ່ໄປນີ້: | |
|---|---|
| "ຈົ່ງໄປ" | ໃນຂໍ້ 19 |
| "ເຮັດໃຫ້ຄົນທຸກຊາດເປັນສິດ" | ໃນຂໍ້ 19 |
| "ສັ່ງສອນເຂົາ" | ໃນຂໍ້ 20 |

*ໃນອາທິດໜ້າ ຈະຮຽນເລື່ອງທີ່ໂປໂລເດີນທາງຈາກໂກລິນໂທກັບໄປກຸງເຢລູຊາເລັມ.*

*ຢ່າລືມຕອບບົດເສັງກ່ອນ!*

ຕອບ:

**1** *ກ. ໃຈ. ຂ. ປາກ. ຄ. ຕີນ. ງ. ນຳຂ່າວດີມາ (ຂ່າວປະເສີດ) ຈ. ເອຊາຢາ 52:7.*

**2** *ກ. ສອງເທື່ອ. ຂ. ຈົ່ງໄປ. ຄ. ອອກໄປ.*

**3** *ໄປປະກາດ.*

**4** *ບ່ອນທີ່ຍັງບໍ່ມີຜູ້ໃດເຄີຍໄດ້ອອກພະນາມຂອງພະຄຣິດ.*

**5** *ກ. ປູກ. ຂ. ທົດນ້ຳ. ຄ. ການປູກ. ງ. ການທົດນ້ຳ.*

**6** *ກ. ຫວ່ານພືດ. ຂ. ທົດນ້ຳ (ສອນ).*

**7** *ກ. ຄົນທັງຫຼາຍໃນແຂວງອາເຊຍທັງພວກຢິວແລະພວກກຼີກໄດ້ຍິນພະທຳຂອງພະເຈົ້າ.*
*ຂ. ມີການອັດສະຈັນ,ພະຍາດຫາຍດີ,ຜີຮ້າຍກໍອອກ ພີ່ນ້ອງສາລະພາບຜິດບາບ.*
*ຄ. ຊ່າງຕີເງິນທີ່ເຄີຍສ້າງແລະຂາຍຮູບພະອາເຕມາ ເຫັນວ່າບໍ່ມີຄົນມາຊື້ແລ້ວເກີດມີການອົນລະຫົນວຸ້ນວາຍ.*

ຕອບ (ຕໍ່):

**8** *ກ. ຂອງຄຶດສະຕຽນທຸກຄົນ. ຂ. ຕ່າງຄົນຕ່າງມີຂອງພະລາດຊະທານ.*

**9** *ກ. ການປູກ. ຂ. ການຫົດນໍ້າ.*

**10** *ກ. ຈົບຕົວສັ່ນ. ຂ. ລິດເດດຂອງພະເຈົ້າ.*

**11** *ອາໂປໂລ.*